ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************

ອົງການກາແດງລາວ

# ບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ 2006 ຂອງອົງການກາແດງລາວ

## I. <u>ສະພາບລວມ:</u>

ອົງການກາແດງລາວ ແມ່ນອົງການຈັດຕັ້ງສັງຄົມໜຶ່ງຢູ່ໃນ ສປປ ລາວ ພາຍໃຕ້ການຊີ້ນຳນຳພາ ຂອງພັກ ແລະ ລັດຖະບານ ມີພາລະບົດບາດໃນການຊ່ວຍເຫລືອປະຊາຊົນບັນດາເຜົ່າຕໍ່ຜູ້ທຸກຍາດຂາດເຂີນ, ປ່ຽວພອຍ ດ້ອຍໂອກາດ ຂາດທີ່ເພິ່ງພາອາໃສ, ຕໍ່ຜູ້ທີ່ສ່ຽງໄພສູງກວ່າເພິ່ນ ແລະ ປົກປັກຮັກສາສຸຂະພາບຂັ້ນຕົ້ນຂອງປະຊາຊົນ. ອົງການກາແດງລາວ ໄດ້ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ແລະ ພາລະບົດບາດເພື່ອໃຫ້ສອດຄ່ອງກັບແນວທາງປ່ຽນແປງໃໝ່ທາງດ້ານເສດຖະກິດສັງຄົມຂອງພັກເຮົາ ບົນ 7 ຫລັການພື້ນຖານຂອງຂະບວນການກາແດງສາກົນ ເຊິ່ງມີລັກສະນະດັ່ງນີ້:

| | |
|---|---|
| 1. ລັກສະນະມີຄວາມເປັນມະນຸດສະທຳ | Humanity |
| 2. ລັກສະນະມີຄວາມທ່ຽງທຳ, ບໍ່ມີຊົ້ນວັນນະ | Impartiality |
| 3. ລັກສະນະມີຄວາມເປັນກາງ | Neutrality |
| 4. ລັກສະນະມີຄວາມເປັນອິດສະຫລະພາບ | Independence |
| 5. ລັກສະນະມີຄວາມສະໝັກໃຈ | Voluntary Service |
| 6. ລັກສະນະມີຄວາມເປັນເອກະພາບ | Unity |
| 7. ລັກສະນະມີຄວາມມີນ້ຳໃຈສາກົນ | Universality |

ໃນປີ 2006 ເປັນປີສຸດທ້າຍຂອງການຈັດຕັ້ງປະຕິບັດແຜນຍຸດທະສາດ 5 ປີ ຄັ້ງທີ I ແລະ ພ້ອມທັງສືບຕໍ່ຮ່າງແຜນຍຸດທະສາດ 5 ປີ ຄັ້ງທີ II (ປີ 2006-2010) ອົງການກາແດງລາວ ໄດ້ສືບຕໍ່ປັບປຸງການຈັດຕັ້ງຕາມພາລະບົດບາດ ເພື່ອໃຫ້ສອດຄ່ອງກັບແນວທາງປ່ຽນແປງໃໝ່ ຂອງພັດເຮົາ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ເພື່ອເພີ້ມຂີດຄວາມສາມາດ ແລະ ເປັນກຳລັງແຮງເຮັດໃຫ້ອົງການກາແດງລາວ ການເປັນກາແດງແຫ່ງຊາດທີ່ເຄື່ອນໄຫວໄດ້ດີ ຕາມແຜນຍຸດທະສາດ 5 ປີ (2001-2005 ແລະ 2006-2010) ທີ່ພັກ ແລະ ລັດຖະບານ ກໍ່ຄືຂອງອົງການກາແດງລາວວາງອອກ.

## II. <u>ໂຄງປະກອບການຈັດຕັ້ງ</u>

ໂຄງປະກອບການຈັດຕັ້ງ ນັບແຕ່ສູນກາງລົງຮອດທ້ອງຖິ່ນປະກອບມີ:

- ອົງການກາແດງລາວສູນການ.
- ອົງການກາແດງລາວສາຂາແຂວງມີ 17 ສາຂາໃນທົ່ວປະເທດ

2.1. <u>ການຈັດຕັ້ງຂອງອົງການກາແດງລາວ:</u>

**2.1.1. ອົງການກາແດງລາວສູນກາງປະກອບມີ:**

- ປະທານກິຕິມະສັກ (ບໍ່ປະຈຳການ) 01 ທ່ານ (ໂດຍແມ່ນປະທານສະພາແຫ່ງຊາດ)
- ປະທານອົງການກາແດງລາວສູນກາງ 01 ທ່ານ
- ຮອງປະທານອົງການກາແດງລາວສູນກາງ 01 ທ່ານ
- ເລຂາທິການໃຫຍ່ອົງການກາແດງລາວສູນກາງ 01 ທ່ານ
- ປະກອບມີ 01 ຫ້ອງການ, 01 ສູນ ແລະ 03 ກອງ.

**ກ. ຫ້ອງການບໍລິຫານອົງການກາແດງລາວ ປະກອບມີ: 03 ພະແນກ, 01 ໜ່ວຍງານ ແລະ 02 ຂະແໜງການ.**

- ພະແນກບໍລິຫານສັງລວມ ແລະ ແຜນການ.
- ພະແນກການເງິນ.
- ພະແນກພົວພັນຕ່າງປະເທດ.
- ໜ່ວຍງານຈັດຕັ້ງນະໂຍບາຍ.
- ຂະແໜງສະຖິຕິ.
- ຂະແໜງພັດທະນາສາຂາ

**ຂ. ກອງອຸປະຕິໄພ-ບັນເທົາທຸກປະກອບມີ 01 ພະແນກການ ແລະ 01 ໜ່ວຍງານ.**

- ພະແນກຫ້າງຫາກະກຽມບັນເທົາທຸກ.
- ໜ່ວຍງານພັດທະນາຊຸມຊົນແມ່ຍິງຊົນນະບົດ.

**ຄ. ກອງສົ່ງເສີມສຸຂະພາບຊຸມຊົນ ປະກອບມີ 03 ພະແນກການ**

- ພະແນກສາທາລະນະສຸກຊຸມຊົນ.
- ພະແນກໂຄສະນາຕ້ານເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ.
- ພະແນກບໍລິການສຸຂະພາບ.

**ງ. ສູນບໍລິຈາກເລືອດ ປະກອບມີ 04 ພະແນກການ**

- ພະແນກບໍລິຫານການເງິນ
- ພະແນກຮັບບໍລິຈາກເລືອດ
- ພະແນກກວດວິເຄາະ ແລະ ອົບຮົມ
- ພະແນກຜະລິດ ແລະ ໃຫ້ຄວາມຮູ້ດ້ານການປິ່ນປົວດ້ວຍເລືອດ.

**ຈ. ກອງຂົນຂວາຍການກຸສົນມີ 01 ພະແນກການ ແລະ 03 ໜ່ວຍງານ**

- ພະແນກໂຄສະນາຂ່າວສານ ແລະ ຈັດພິມວາລະສານ
- ໜ່ວຍງານຂົນຂວາຍຊອກຫາແຫ່ລງທຶນ
- ໜ່ວຍງານປຸກລະດົມຂົນຂວາຍຊາວໜຸ່ມເຍົາວະຊົນ, ແມ່ຍິງກາແດງ
- ໜ່ວຍງານສືບຫາວຫາຍາດພີ່ນ້ອງ

2.1.2. ອົງການກາແດງລາວສາຂາແຂວງ ແລະ ນະຄອນຫລວງ ປະກອບມີ:

- ປະທານກິຕິມະສັກ (ບໍ່ປະຈຳການ)
- ປະທານອົງການກາແດງສາຂາແຂວງ (ບໍ່ປະຈຳການ)
- ຮອງປະທານອົງການກາແດງສາຂາແຂວງ, ທັງເປັນຫົວໜ້າຫ້ອງການ (ປະຈຳການ)
- ຄະນະກຳມະການກາແດງ (ບໍ່ປະຈຳການ)
- ຄະນະອະນຸກຳມະການ (ບໍ່ປະຈຳການ)
- ໜ່ວຍງານຕ່າງໆ:
  - + ໜ່ວຍງານຫ້ອງການບໍລິຫານ-ບັນຊີການເງິນ.
  - + ໜ່ວຍງານອະປະຕິໄພ-ບັນເທົາທຸກ.
  - + ໜ່ວຍງານສົ່ງເສີມສຸຂະພາບ.
  - + ໜ່ວຍງານຂົນຂວາຍຊອກຫາແຫ່ລ່ງທຶນ.

2.2. <u>ພະນັກງານອົງການກາແດງລາວທົ່ວປະເທດ.</u>

ອົງການກາແດງລາວປະກອບມີພະນັກງານປະຈຳການທັງໝົດ 242 ຄົນ, (ນັບທັງພະນັກງານສົມບູນ ແລະ ພະນັກງານຕາມສັນຍາ)

- ພະນັກງານອົງການກາແດງລາວສູນກາງປະກອບມີ: ພະນັກງານ 77 ຄົນ, ຍິງ 31 ຄົນ (ນັບທັງພະນັກງານສົມບູນ, ພະນັກງານບຳນານ ແລະ ພະນັກງານຕາມສັນຍາ)
  - ພະນັກງານສົມບູນ 51 ຄົນ, ຍິງ 13 ຄົນ (ພະນັກງານບຳນານ 7 ຄົນ, ຍິງ 3 ຄົນ)
  - ພະນັກງານຕາມສັນຍາ 26 ຄົນ, ຍິງ 18 ຄົນ.
- ພະນັກງານອົງການກາແດງລາວສາຂາແຂວງ 17 ສາຂາໃນທົ່ວປະເທດ: ປະກອບມີພະນັກງານປະຈຳການທັງໝົດ 161 ຄົນ, ຍິງ 59 ຄົນ.
  - ພະນັກງານສົມບູນ 138 ຄົນ, ຍິງ 51 ຄົນ.
  - ພະນັກງານຕາມສັນຍາ 23 ຄົນ, ຍິງ 8 ຄົນ.

III. <u>ຜົນງານໃນໄລຍະ 1 ປີຜ່ານມາ:</u>

ໃນໄລຍະ 1 ປີ ຜ່ານມາ ອົງການກາແດງລາວ ໄດ້ເຄື່ອນໄຫວວຽກງານ ຕາມພາລະບົດບາດຂອງຕົນ ຢ່າງມີປະສິດທິຜົນສູງເຂົ້າໃນວຽກງານຕົວຈິງ ເຊິ່ງສະແດງອອກເຖິງນ້ຳໃຈຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ການຈັດຕັ້ງໄດ້ມອບໝາຍເປັນຢ່າງດີ:

3.1 <u>ວຽກງານການເມືອງແນວຄິດ</u>

- ພະນັກງານລັດຖະກອນມີແນວຄິດອຸ່ນອ່ຽນຕໍ່ໜ້າທີ່ວຽກງານດີ, ມີຄຸດົມການຍຶດໝັ້ນຕໍ່ການນຳພາຂອງພັກ ແລະ ລັດ.

- ພະນັກງານລັດຖະກອນທຸກຄົນໄດ້ເຂົ້າຮ່ວມໃນການສຶກສາຄົ້ນຄ້ວາຮ່ຳຮຽນເນື້ອໃນມະຕິຄຳສັ່ງຕ່າງໆ ທີ່ພັກລັດວາງອອກ ຢ່າງເປັນປົກກົຕິ ບໍ່ວ່າຢູ່ຂັ້ນສູນກາງ ຫລື ທ້ອງຖິ່ນເຊັ່ນ:
+ ເອກະສານປະຫວັດການເຄື່ອນໄຫວຂອງປະທານໄກສອນ ພົມວິຫານ, ປະທານສຸພານຸວົງ, ປະທານຄຳໄຕສີພັນດອນ, ເອກະສານວັນສຳຄັນຂອງຊາດ ແລະ ເອກະສານຂໍ້ກຳນົດຕ່າງໆ ຈຳນວນໜຶ່ງ ທີ່ຂັ້ນເທິງວາງອອກ.
- ໄດ້ມີການເປີດບັ້ນດຳເນີນຊີວິດການເມືອງຢ່າງເປັນປົກກະຕິໃນແຕ່ລະເດືອນເພື່ອສ້າງໃຫ້ພະນັກງານ ມີແນວຄິດປອດໃສຂາວສະອາດ, ປະຢັດມັດທະຍັດ ແລະ ຕໍ່ຕ້ານທຸກກົນອຸບາຍຂອງສັດຕູ ແລະ ປະ ກົດການຫຍໍ້ທໍ້ອື່ນໆ.

3.2. <u>ວຽກງານການເຄື່ອນໄຫວກິດຈະກຳຕ່າງໆ:</u>

**3.2.1. ວຽກງານຫ້ອງການ:**

- ຈັດກອງປະຊຸມປະຈຳເດືອນ ເພື່ອທົບທວນວຽກງານຜ່ານມາ ແລະ ວາງແຜນການເດືອນຕໍ່ໄປ, ໄດ້ ປະຕິບັດເປັນປົກກະຕິ.
- ຈັດກອງປະຊຸມໄຕມາດເພື່ອທົບທວນວຽກຜ່ານມາ ແລະ ວາງແຜນການໄຕມາດຕໍ່ໄປ, ໂດຍສະ ເພາະແມ່ນບັນດາໂຄງການຕ່າງໆ ທີ່ໄດ້ຮັບທຶນສະໜັບສະໜູນຈາກ PNS ເຊັ່ນ: ໂຄງການໂລກ ເອດ, ໂຄງການຜູ້ອາຍຸສູງ, ໂຄງການ ຮສຂ ພາກເໜືອ ແລະ ຫ້ອງການພົວພັນຮ່ວມມືສາກົນ.
- ຈັດກອງປະຊຸມປະຈຳປີ ເພື່ອທົບທວນວຽກຜ່ານມາ ແລະ ວາງແຜນປີຕໍ່ໜ້າ, ແຂວງລະ 1 ຄັ້ງ ມີ ຜູ້ແທນອອ້ມຂ້າງແຂວງ, ການນຳຂອງແຂວງ ແລະ ຜູ້ແທນຈາກສູນກາງເຂົ້າຮ່ວມນຳ.
- ໄດ້ຈັດກອງປະຊຸມໃນການປຶກສາຫາລື ຄົ້ນຄ້ວາແຜນຍຸດທະສາດ 5 ປີ ຂອງກາແດງລາວ ໄລຍະ II ຂອງປີ 2006-2010.
- ໄດ້ຈັດຕັ້ງກອງປະຊຸມຄະນະກຳມະການເລືອດແຫ່ງຊາດກ່ຽວກັບແຜນພັດທະນາເລືອດເພື່ອ ກຽມພ້ອມໃຫ້ມີເລືອດພຽງພໍ.
- ໄດ້ເຂົ້າຮ່ວມກອງປະຊຸມປະເມີນຜົນໂຄງການຮ່ວມກັບຜູ້ໃຫ້ທຶນຈາກກາແດງປະເທດເພື່ອນມິດ ທີ່ ສະໜັບສະໜູນກາແດງສາຂາແຂວງໃນແຕ່ລະໄຕມາດ ເຊັ່ນ: DRC, FRC, NRC.
- ໄດ້ຈັດງານສະເຫລີມສະຫລອງວັນສຳຄັນຕ່າງໆຂອງອົງການກາແດງລາວ ເຊັ່ນ: ວັນກາແດງສາກົນ ວັນທີ 08/05 ແລະ ວັນຜູ້ບໍລິຈາກເລືອດໂລກ ວັນທີ 14/06.

**# ວຽກງານລົງຊີ້ນຳຕິດຕາມຊຸກຍູ້ກິດຈະກຳຕ່າງໆເຊັ່ນ:**

- ການນຳອົງການກາແດງລາວ ໄດ້ລົງຕິດຕາມຊຸກຍູ້ວຽກງານວິຊາການຢູ່ບັນດາກາແດງສາຂາແຂວງ ພາກເໜືອ, ພາກກາງ ແລະ ພາກໄຕ້.
- ໄດ້ລົງຕິດຕາມຊຸກຍູ້ບັນດາກິດຈະກຳຕ່າງໆຢູ່ເມືອງ ແລະ ບ້ານເປົ້າໝາຍຂອງໂຄງການໃນແຕ່ລະ ໄຕມາດ (04 ຄັ້ງຕໍ່ປີ).
- ໄດ້ຕິດຕາມຊຸກຍູ້ການປະຕິບັດກິດຈະກຳຕ່າງໆນຳບັນດາສາຂາແຂວງ.

- ໄດ້ເຂົ້າຮ່ວມກອງປະຊຸມທົບທວນປະຈໍາໄຕມາດ ແລະ ການວາງແຜນການຮ່ວມກັບ PNS

**# ວຽກງານການປົກປັກຮັກສາ ແລະ ກໍ່ສ້າງສໍານັກງານອົງການ:**
- ສ້ອມແປງຫ້ອງການອົງການກາແດງລາວ, ໂດຍນໍາໃຊ້ທຶນຂອງລັດຖະບານ 30.000.000 ກີບ
- ການບູລະນະສ້ອມແປງອຸປະກອນຮັບໃຊ້ຫ້ອງການຕ່າງໆ ຢູ່ສູນກາງ ແລະ ສາຂາແຂວງ ເຊັ່ນ: ພາຫະພະ, ພິມດີດ, ຈັກອັດເອກະສານ ແລະ ຄອມພິວເຕີ ໂດຍນໍາໃຊ້ງົບປະມານຂອງລັດ ແລະ ຂອງກາແດງສາກົນ (ICRC, FRC, DRC, NRC, SRC)

**# ການຈັດຊື້ໃໝ່:**
- ຈັດຊື້ໂຕະ, ຕັ່ງ, ຕູ້ໃສ່ເອກະສານ, ອຸປະກອນຮັບໃຊ້ຫ້ອງການຈໍານວນໜຶ່ງ ນໍາໃຊ້ງົບປະມານຂອງລັດ ແລະ ຂອງກາແດງປະເທດເພື່ອນມິດທີ່ໃຫ້ການຊ່ວຍເຫລືອແກ່ໂຄງການຢູ່ສູນກາງ ແລະ ສາຂາແຂວງ.
- ອົງການກາແດງລາວ ໄດ້ຮັບທຶນສະໜັບສະໜູນຈາກກາແດງແດນມາກຈໍານວນໜຶ່ງເພື່ອຮັບໃຊ້ວຽກງານບໍລິຫານປະຈໍາວັນເຊັ່ນ: ເຄື່ອງຮັບໃຊ້ຫ້ອງການຕ່າງໆ.

**# ການພັດທະນາຊັບພະຍາກອນມະນຸດ:**
- ຍົກລະດັບວິຊາການໄລຍະຍາວ 5 ທ່ານ
- ຍົກລະດັບວິຊາການໄລຍະສັ້ນ 6 ທ່ານ, ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານ ແລະ ກາແດງປະເທດເພື່ອນມິດ.
- ອົບຮົມການບໍລິຫານຄຸ້ມຄອງ 10 ທ່ານ ຢູ່ພາຍໃນ, ໄດ້ຮັບທຶນສະນັບສະໜູນຈາກກາແດງສາກົນ.
- ອົບຮົມການຂຽນໂຄງການ 27 ທ່ານ ຢູ່ພາຍໃນໄດ້ຮັບທຶນສະໜັບສະໜູນຈາກ PNS.
- ອົບຮົມດ້ານບັນຊີການເງິນ 46 ຄົນ ຢູ່ພາຍໃນ ແລະ 01 ຄົນຢູ່ຕ່າງປະເທດ, ໄດ້ຮັບທຶນສະໜັບສະໜູນຈາກກາແດງປະເທດສະວິດເຊີແລນ.
- ອົບຮົມດ້ານຄອມພິວເຕີ 2 ຄົນ, ຢູ່ພາຍໃນ ໄດ້ຮັບທຶນສະໜັບສະໜູນຈາກກາແດງປະເທດເພື່ອນມິດ.
- ອົບຮົມດ້ານວິຊາການອື່ນໆ 83 ຄົນ ຢູ່ພາຍໃນ ແລະ 2 ຄົນທີ່ຕ່າງປະເທດ ໄດ້ຮັບທຶນສະໜັບສະໜູນຈາກກາແດງປະເທດເພື່ອນມິດ.
- ທັດສະນະສຶກສາພາຍໃນ 19 ທ່ານ.

**# ວຽກງານນະໂຍບາຍ, ຍ້ອງຍໍ, ຈັດຊັ້ນ ແລະ ຂັ້ນເງິນເດືອນ:**

*** ວຽກງານນະໂຍບາຍ:**
- ຈັດຕັ້ງການໄປຢ້ຽມຢາມ ແລະ ຊື້ຂອງຂວັນໃຫ້ແກ່ຄອບຄົວພະນັກງານທີ່ເຈັບເປັນ, ເກີດລູກ ແລະ ອື່ນໆ 23 ຄັ້ງ.

- ຈັດຕັ້ງການໄປຢ້ຽມຢາມ ແລະ ຊື້ຂອງຂວັນອ່ອຍພອນໃຫ້ແກ່ຄອບຄົວພະນັກງານບຳນານ 1 ຄັ້ງ, ເນື່ອງໃນໂອກາດປີໃໝ່ລາວ, ປີໃໝ່ສາກົນ.
- ປະຕິບັດນະໂຍບາຍຕໍ່ພະນັກງານທີ່ຂໍອອກຮັບອຸດໜູນບຳນານ 2 ຄົນ.

*** ວຽກງານຍ້ອງຍໍ:**

- ປະທານອົງການກາແດງລາວ ໄດ້ອອກຂໍ້ຕົກລົງຍ້ອງຍໍພາກສ່ວນບຸກຄົນ ແລະ ລວມໝູ່ ທີ່ມີຜົນງານດີເດັ່ນປະກອບສ່ວນເຂົ້າໃນວຽກງານມະນຸດສະທຳຂອງອົງການກາແດງລາວຈຳນວນ 15 ໃບ/ທ່ານ ໃນນັ້ນ ໄດ້ຍ້ອງຊ່ຽວຊານຕ່າງປະເທດຈຳນວນ 1 ໃບ/ທ່ານ.
- ອົງການກາແດງລາວ ກໍ່ໄດ້ຮັບໃບຊົມເຊີຍຈາກພາກສ່ວນຕ່າງໆ ຈຳນວນ 2 ໃບ.

*** ວຽກງານເລື່ອນຊັ້ນ-ຂັ້ນເງິນເດືອນ:**

- ຊັ້ນ 5 ຈຳນວນ 1 ຄົນ.
- ຊັ້ນ 4 ຈຳນວນ 13 ຄົນ.
- ຊັ້ນ 3 ຈຳນວນ 8 ຄົນ.
- ຊັ້ນ 2 ຈຳນວນ 1 ຄົນ.
- ຊັ້ນ 1 ຈຳນວນ 1 ຄົນ.

*** ວຽກງານການເງິນ-ແຜນການ:**

- ໄດ້ສະຫລຸບລາຍຮັບ-ລາຍຈ່າຍງົບປະມານປະຈຳປີ, ປະຈຳແຕ່ລະງວດເຊັ່ນ: ລາຍຈ່າຍຮ່ວງງົບປະມານຂອງລັດ, ງົບປະມານການຊ່ວຍເຫລືອຈາກກາແດງປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນທີ່ໃຫ້ການສະໜັບສະໜູນ.
- ໄດ້ຕິດຕາມຊຸກຍູ້ວຽກງານການເງິນຢູ່ນຳກາແດງສາຂາແຂວງພາກກາງ ແລະ ພາກໃຕ້.
- ໄດ້ເຂົ້າຮ່ວມກ່ຽວກັບການສ້າງແຜນງົບປະມານປະຈຳປີ 2005-2006 ທີ່ກະຊວງການເງິນເປັນເຈົ້າພາບຈັດຂຶ້ນ.
- ໄດ້ຂື້ນແຜນຂໍທືນສະໜັບສະໜູນຈາກກາແດງປະເທດເພື່ອນມິດເພື່ອນຳໃຊ້ເຂົ້າໃນກິດຈະກຳຕ່າງໆຂອງອົງການກາແດງລາວ.

**# ວຽກງານພົວພັນຕ່າງປະເທດ.**

**1) ການປະກອບເອກະສານໃຫ້ຊ່ຽວຊານຕ່າງປະເທດ.**

- ໄດ້ພົວພັນນຳອົງການຈັດຕັ້ງສາກົນກະຊວງການຕ່າງປະເທດ ກ່ຽວກັບການຮ່ວມມືກັບ ICRC ທີ່ຈະໃຫ້ການຊ່ວຍເຫລືອເຂດພິເສດໄຊສົມບູນ.
- ໄດ້ພົວພັນກັບສູນຝຶກອົບຮົມ TADO ແລະ ບໍລິສັດ Core Facilitators ແລະ ຕົກລົງຈັດຊຸດຝຶກອົບຮົມກ່ຽວກັບ Workshop Organising.
- ນຳພາທ່ານ Fred Grim ແຂກ ICRC ເຂົ້າພົບທ່ານປະທານອົງການກາແດງລາວ ກ່ຽວກັບການຊ່ວຍເຫລືອໃນຕໍ່ໜ້າຂອງ ICRC ຢູ່ເມືອງພູຄູນ ແລະ ພູກູດ.

- ເຂົ້າຮ່ວມປຶກສາຫາລືກັບ ນາງ ເມລານີ ກາແດງເນເທີແລນ ກ່ຽວກັບການກຽມຊຸດອົບຮົມ ການດຳເນີນກອງປະຊຸມຢ່າງມີປະສິດທິພາບ, ການສ້າງຖານຂໍ້ມູນ ແລະ ຕິດຕາມປະເມີນຜົນ.
- ເຂົ້າຮ່ວມກອງປະຊຸມປະເມີນຜົນໂຄງການນຳ NRC ທີ່ສະໜັບສະໜູນ 3 ແຂວງພາກກາງ: ແຂວງບໍລິຄຳໄຊ, ຄຳມ່ວນ ແລະ ສະຫວັນນະເຂດ.
- ພົວພັນຈັດຕັ້ງກອງປະຊຸມກ່ຽວກັບການປັບປຸງວຽກງານບໍລິຫານ ຢູ່ແຂວງວຽງຈັນ.
- ເຂົ້າຮ່ວມປະຊຸມນຳ NRC ກ່ຽວກັບທິດທາງການຮ່ວມມືແກ້ໄຂຕໍ່ໜ້າ ໂຄງການແລກປ່ຽນບົດຮຽນລະຫວ່າງຊາວໜຸ່ມກາແດງ.
- ເຂົ້າຮ່ວມກອງປະຊຸມ OD Forum ຄັ້ງທີ 3 ທີ່ປະເທດມຽນມ້າ.
- ພົວພັນຈັດກອງປະຊຸມວາງແຜນຍຸດທະສາດ 5 ປີ ກ່ຽວກັບການພັດທະນາຊັບພະຍາກອນມະນຸດທີ່ແຂວງວຽງຈັນ.
- ພົວພັນກັບ ICRC ເພື່ອສະໜັບສະໜູນການຕິດຕັ້ງ Web site ແລະ ການພິມປະຕິທິນປີ 2007.
- ຕ້ອນຮັບຊ່ຽວຊານຈາດກາແດງເຢຍລະມັນ ທີ່ມາຢ້ຽມຢາມອົງການກາແດງລາວ ແລະ ໄດ້ນຳພາເບິ່ງກິດຈະກຳຂອງກາແດງສາຂາແຂວງຄຳມ່ວນ ແລະ ປຶກສາຫາລືກ່ຽວກັບການສະໜັບສະໜູນວຽກງານເລືອດ.
- ອຳນວຍຄວາມສະດວກໃຫ້ການແລ່ນເອກະສານຂໍວີຊາ ເຂົ້າ-ອອກ ປະເທດໃຫ້ແກ່ບັນດາຊ່ຽວຊານທີ່ມາເຮັດວຽກນຳອົງການກາແດງລາວ.

**2) ວຽກງານອຳນວຍຄວາມສະດວກ.**

- ອຳນວຍຄວາມສະດວກໃນການສົ່ງ ແລະ ຕິດຕາມເອກະສານທີ່ສະເໜີຂໍອະນຸມັດໃຫ້ຄະນະນຳ ແລະ ພະນັກງານອົງການກາແດງລາວໄປຮ່ວມກອງປະຊຸມ ແລະ ຮ່ວມງານແລກປ່ຽນບົດຮຽນຕ່າງໆ ຢູ່ຕ່າງປະເທດ.
- ອຳນວຍຄວາມສະດວກໃນການຈອງໂຮງແຮມໃຫ້ແກ່ບັນດາຊ່ຽວຊານ ທີ່ເດີນທາງມາປະຊຸມກັບໜ່ວຍງານ OD&CB.
- ຕິດຕໍ່ພົວພັນກັບບັນດາຄູ່ຮ່ວມມື ແລະ ກາແດງເພື່ອນມິດ ເພື່ອຮ່ວມກອງປະຊຸມ Coordination Meeting.

**3) ວຽກງານຕິດຕາມປະເມີນຜົນ**

- ໄດ້ຮັບການມອບໝາຍຈາກຫ້ອງການ ຕິດຕໍ່ປະສານງານກັບຫ້ອງການ, ກອງ ເພື່ອການແຈ້ງລາຍຊື່ຜູ້ເຂົ້າຮ່ວມຝຶກອົບຮົມວຽກງານຕິດຕາມແລະປະເມີນຜົນ.
- ປຶກສາຫາລືກັບກາແດງພາກພື້ນກ່ຽວກັບການກະກຽມເປີດຊຸດອົບຮົມ M&E ເຊັ່ນການກຳນົດວັນໃນການເປີດຊຸດອົບຮົມ, ປັບປຸງແຜນການໃຊ້ຈ່າຍໃນການເປີດກອງປະຊຸມ ແລະ ລາຍຊື່ຜູ້ທີ່ຈະເຂົ້າຮ່ວມ ແລະ ບັນຫາອື່ນໆ.
- ປຶກສາຫາລືກັບຫ້ອງການກາແດງລາວ ກ່ຽວກັບການຄັດເລືອກພະນັກງານທີ່ຈະເຂົ້າຮ່ວມຝຶກການສ້າງຖານຂໍ້ມູນ ເພື່ອກະກຽມຄັດເລືອກເອົາໃຫ້ເປັນຜູ້ບັນທຶກຂໍ້ມູນສະເພາະປະຈຳກາແດງລາວ.
- ລົງຕິດຕາມການໃຊ້ລະບົບບັນຊີໃໝ່ຂອງກາແດງ ຢູ່ 3 ແຂວງພາກໃຕ້ ແລະ 3 ແຂວງພາກເໜືອ.

- ອົບຮົມການເປັນຄູຝຶກປະຖົມພະຍາບານໃຫ້ແກ່ເປົ້າໝາຍຄູຝຶກປະຖົມພະຍາບານອົງການກາແດງ ລາວ.
- ຈັດກອງປະຊຸມພາວະການເປັນຜູ້ນຳທີ່ນະຄອນຫລວງວຽງຈັນ ໃນວັນທີ 18-20/12/2006

**4) ວຽກງານບໍລິຫານການເງິນຂອງໜ່ວຍງານ**

- ຮ່າງຈົດໝາຍສະແດງຄວາມຍິນດີຕ້ອນຮັບຜູ້ແທນຂອງກາແດງຝຣັ່ງທີ່ມາຢ້ຽມຢາມອົງການກາແດງ ລາວ ແລະ ກິດຈະກຳຂອງກາແດງຝຣັ່ງ ຢູ່ແຂວງໄຊຍະບູລີ ແລະ ແຂວງວຽງຈັນ.
- ຈັດຫ້ອງປະຊຸມເພື່ອຮັບແຂກສະຫະພັນກາແດງທີ່ມາຢ້ຽມຢາມກາແດງລາວ
- ໄດ້ນຳພາຊ່ຽວຊານນ້ຳສະອາດຂອງ ICRC ໄປຕິດຕາມກິດຈະກຳຢູ່ເມືອງລ່ອງຊານ ແລະ ນຳພາ ຊ່ຽວຊານ NLRC ລົງຕິດຕາມກິດຈະກຳຢູ່ສາຂາແຂວງ.
- ອັດເອກະສານບັນທຶກຄວາມເຂົ້າໃຈລະຫວ່າງກາແດງລາວ, ຫວຽດນາມ ແລະ ກຳປູເຈຍ ເພື່ອແຈກ ຢາຍໃຫ້ແຕ່ລະກອງ, ສາຂາ ແລະ ແຈ້ງໃຫ້ກະຊວງການຕ່າງປະເທດເພື່ອຮັບຊາບ.

**3.2.2. ວຽກງານຕອບໂຕ້ອຸປະຕິໄພ-ບັນເທົາທຸກ**

**# ວຽກງານຫ້າງຫາກະກຽມຕອບໂຕ້ອຸປະຕິໄພ:**

**ກ. ການເຄື່ອນໄຫວກິດຈະກຳຕ່າງໆ:**

- ໄດ້ຕິດຕາມ ແລະ ກວດກາສາງພາກເໜືອ ທີ່ແຂວງອຸດົມໄຊ ໃນວັນທີ 25-29/09/2006
- ໄດ້ຮັບແຜນສະເໜີຂໍທຶນຈາກໂຄງການ Shoken Fund ສຳລັບປີ 2006 ເພື່ອມານຳໃຊ້ໃນ ກິດຈະກຳຕ່າງໆ.
- ໄດ້ຮັບເຄື່ອງນຸ່ງຮົມຈາກສະມາຄົມເສື້ອຜ້າ OSAKA ແຫ່ງປະເທດຍີ່ປຸ່ນ ຈຳນວນ 155 ໂຕ້ນ ໃນ ວັນທີ 13/02/2006 ມູນຄ່າທັງໝົດ 3.100 ໂດລາ.
- ໄດ້ຮັບເຄື່ອງນຸ່ງຮົມຈາກກາແດງແດນມາກ ຈຳນວນ 164 ມັດ ໃນວັນທີ 15/02/2006 ມູນຄ່າທັງ ໝົດ 16.974,54 ໂດລາ.
- ໄດ້ຈັດຕັ້ງກວດກາເຄື່ອງ, ນັບເຄື່ອງ, ຂຶ້ນບັນຊີເຄື່ອງທີ່ຮັບການຊ່ວຍເຫລືອຈາກສະມາຄົມເສື້ອຜ້າ OSAKA ແຫ່ງປະເທດຍີ່ປຸ່ນ ແລະ ຈາກການແດງແດນມາກ.
- ໄດ້ຕ້ອນຮັບ Mr. Michael Annear ຫົວໜ້າຕອບໂຕ້ໄພພິບັດພາກພື້ນຄົນໃໝ່ (RDMU) ໃນວັນ ທີ 27-29/03/2006 ເພື່ອມາຢ້ຽມຢາມອົງການກາແດງລາວ ແລະ ເຮັດວຽກຮ່ວມກັບກອງອຸປະຕິ ໄພ-ບັນເທົາທຸກ ຂອງອົງການກາແດງລາວ.
- ໄດ້ຈັດສົ່ງເຄື່ອງນຸ່ງຫົ່ມ ທີ່ໄດ້ຮັບຈາກສະມາຄົມເສື້ອຜ້າ OSAKA ແຫ່ງປະເທດຍີ່ປຸ່ນ ແລະ ກາ ແດງແດນມາກໃຫ້ແກ່ສາງພາກເໜືອ, ພາກກາງ ແລະ ພາກໃຕ້.
- ໄດ້ສົ່ງໃບແຈ້ງການໄປຍັງທຸກໆກາແດງສາຂາແຂວງໃນທົ່ວປະເທດ ເພື່ອເຮັດແຜນທີ່ເຂດທີ່ມີຄວາມ ສ່ຽງສູງ, ເຂດທີ່ມີຄວາມອັນຕະລາຍຕໍ່ໄພພິບັດທີ່ມີນ້ຳຖ້ວມໃນໄລຍະລະດູຝົນ ແລະ ໃຫ້ລາຍງານ ສະພາບໄພນ້ຳຖ້ວມ ໃຫ້ສູນກາງຕາມແບບຟອມລາຍງານປະຈຳອາທິດ ແລະ ໃນກໍລະນີສຸກເສີນ ແມ່ນໃຫ້ລາຍງານໃນ 24 ຊົ່ວໂມງ ສົກປີ 2006

- ໄດ້ຮັບການສົ່ງລາຍງານກ່ຽວກັບເຂດທີ່ມີຄວາມສ່ຽງສູງ ແລະ ເຂດທີ່ມັກມີໄພພິບັດຕ່າງໆທີ່ເກີດຂື້ນໃນແຕ່ລະແຂວງໃນທົ່ວປະເທດ ແລະ ໄດ້ສຳເລັດການສ້າງແຜນທີ່ໄພອັນຕະລາຍ (Hazard Mapping)
- ສຳເລັດການຈັດຝຶກອົບຮົມກ່ຽວກັບທີມຕອບໂຕ້ໄພພິບັດທີ່ນາປ່າກວາງຮີສອດ ແຂວງວຽງຈັນ ໃນວັນທີ 14-23/08/2006 ເຊິ່ງມີພະນັກງານຈາດສູນກາງ ແລະ 17 ສາຂາແຂວງເຂົ້າຮ່ວມທັງໝົດ 36 ຄົນ, ຍິງ 04 ຄົນ.

ຂ. ເຂົ້າຮ່ວມກອງປະຊຸມ ແລະ ຝຶກອົບຮົມ:

- ໄດ້ເຂົ້າຮ່ວມຝຶກອົບຮົມກ່ຽວກັບການເປັນຄູຝຶກ, ອົບຮົມກ່ຽວກັບການຈັດຕັ້ງປະຕິບັດກົດໝາຍມະນຸດສະທຳສາກົນ, ວຽກງານປ້ອງກັນ ແລະສະກັດກັ້ນພະຍາດໄຂ້ຫວັດສັດປີກ ຈັດຂື້ນທີ່ແຂວງຫລວງພະບາງ ໃນວັນທີ 22-23/11/2005
- ໄດ້ເຂົ້າຮ່ວມຝຶກອົບຮົມກ່ຽວກັບວຽກງານພະລາທິການພາກພື້ນອາຊີປາຊີຟິກຈັດຂື້ນທີ່ກົວລາລຳເປີ ທີ່ປະເທດມາເລເຊຍ, ເຂົ້າຮ່ວມກອງປະຊຸມ 3ປະເທດກ່ຽວກັບ Humanitarian Activities ຢູ່ປະເທດ ສສ ຫວຽດນາມ.

**# ວຽກງານຊ່ວຍເຫລືອບັນເທົາທຸກ:**

- ໄດ້ນຳເອົາເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ຄອບຄົວໄປມອບໃຫ້ປະຊາຊົນທີ່ຖືກອັກຄີໄພເປັນມູນຄ່າ 138.089.041 ກີບ, ມີ 301 ຄອບຄົວ, ມີ 76 ບ້ານທີ່ໄດ້ຮັບຄວາມເສຍຫາຍ.
- ໄດ້ນຳເອົາເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ຄອບຄົວໄປມອບໃຫ້ປະຊາຊົນທີ່ຖືກໄພນ້ຳຖ້ວມ ເປັນມູນຄ່າ 74.381.000 ກີບ, ມີ 326 ຄອບຄົວ, ມີ 2 ບ້ານ ທີ່ໄດ້ຮັບຄວາມເສຍຫາຍ.
- ໄດ້ນຳເອົາເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ຄອບຄົວໄປມອບໃຫ້ປະຊາຊົນທີ່ໄດ້ຮັບເຄາະຮ້າຍຈາກຕາຝັ່ງເຈື່ອນ, ດິນເຊາະເຈື່ອນ ແລະ ຍ້າຍຖິ່ນຖານ ເປັນມູນຄ່າ 14.650.000 ກີບ, ມີ 131 ຄອບຄົວ, ມີ 2 ບ້ານ ທີ່ໄດ້ຮັບຄວາມເສຍຫາຍ.
- ໄດ້ນຳເອົາເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ຄອບຄົວໄປມອບໃຫ້ບັນດາໂຮງຮຽນຊົນຊາດຊົນເຜົ່າ, ຜູ້ທຸກຍາກປ່ຽວພອຍ ດ້ອຍໂອກາດ ແລະ ປະຊາຊົນທີ່ຢູ່ຫ່າງໄກສອກຫລີກ ເປັນມູນຄ່າ 264.650.500 ກີບ, ມີ 930 ຄອບຄົວ, ມີ 35 ບ້ານ ທີ່ໄດ້ຮັບຄວາມເສຍຫາຍ.
- ໄດ້ນຳເອົາເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ຄອບຄົວໄປມອບໃຫ້ປະຊາຊົນທີ່ໄດ້ຮັບເຄາະຮ້າຍຈາກເຫດການອື່ນໆ ເປັນມູນຄ່າ 123.004.000 ກີບ, ມີ 4 ຄອບຄົວ, 8 ບ້ານ.

**3.2.3. ວຽກງານສົ່ງເສີມສຸຂະພາບຊຸມຊົນ:**

**# ວຽກງານປະຖົມພະຍາບານ:**

- ສ້າງອາສາສະມັກປະຖົມພະຍາບານ ມີ 117 ບ້ານ, ມີຜູ້ເຂົ້າຮ່ວມ 249 ຄົນ, ຍິງ 95 ຄົນ.
- ສ້າງຄູຝຶກກ່ຽວກັບວຽກງານປະຖົມພະຍາບານ ມີ 38 ບ້ານ, ມີຜູ້ເຂົ້າຮ່ວມ 41 ຄົນ, ຍິງ 0 ຄົນ.

- ຝຶກອົບຮົມວຽກງານປະຖົມພະຍາບານ ແລະ ວຽກງານຄວາມປອດໄພບົນທ້ອງຖະໜົນຕາມສະຖານທີ່ຕ່າງໆ (ບ້ານ, ສໍານັກງານ, ອົງການອື່ນໆ) ມີ 74 ບ້ານ.
- ອົບຮົມອາສາສະມັກບ້ານ 210 ບ້ານ, ມີຜູ້ເຂົ້າຮ່ວມ 504 ຄົນ, ຍິງ 69 ຄົນ.
- ອົບຮົມອາສາສະມັກຊາວໜຸ່ມເຍົາວະຊົນ ຕາມໂຮງຮຽນຕ່າງໆ, ມີຜູ້ເຂົ້າຮ່ວມ 32 ຄົນ, ຍິງ 18 ຄົນ.
- ສະໜອງອະປະກອນປະຖົມພະຍາບານໃຫ້ ອສບ ຈໍານວນ 10 ບ້ານ, 509 ຊຸດ.

**# ວຽກງານຕ້ານເອດ.**

- ຝຶກອົບຮົມວຽກງານຕ້ານເອດ ໃຫ້ຊາວໜຸ່ມແບບ ເພື່ອນສອນເພື່ອນ ຈໍານວນ 7 ຄັ້ງ ຜູ້ເຂົ້າຮ່ວມທັງໝົດ 136 ຄົນ, ຍິງ 80 ຄົນ.

**# ວຽກງານຈັດຫານໍ້າສະອາດ ແລະ ອະນາໄມສິ່ງແວດລ້ອມ:**

- ສໍາເລັດການກໍ່ສ້າງນໍ້າລິນ 33 ໜ່ວຍ, ໄດ້ຮັບທຶນສະໜັບສະໜູນຈາກກາແດງສາກົນ ເປັນມູນຄ່າ 286.653.713 ກີບ ແລະ 134.829,91 ໂດລາ, ທຶນລັດຖະບານ 415.000.000 ກີບ, ຈາກປະຊາຊົນ 80.812.000 ກີບ.
- ສໍາເລັດການກໍ່ສ້າງນໍ້າສ້າງ 47 ໜ່ວຍ, ໄດ້ຮັບທຶນສະໜັບສະໜູນຈາກກາແດງສາກົນ 7.636,41 ໂດລາ.
- ສໍາເລັດການກໍ່ສ້າງນໍ້າບາດານ 51 ໜ່ວຍ, ໄດ້ຮັບທຶນສະໜັບສະໜູນຈາກກາແດງສາກົນ ເປັນມູນຄ່າ 47.485,58 ໂດລາ.
- ສໍາເລັດການກໍ່ສ້າງວິດຖ່າຍ 1.926 ໜ່ວຍ, ໄດ້ຮັບທຶນສະໜັບສະໜູນຈາກກາແດງສາກົນ ເປັນມູນຄ່າ 13.800.000 ກີບ ແລະ 59.933,75 ໂດລາ.

* ໂຄງການນໍ້າສະອາດໂດຍການຮ່ວມມືກັບກາແດງນິວຊີແລນ-IFRC ທີ່ມີມູນຄ່າ 75. 000 ໂດລາ.
- ສໍາເລັດການກໍ່ສ້າງນໍ້າບາດານ 55 ບໍ່ (ສາລະວັນ 28 ບໍ່, ເຊກອງ 22 ບໍ່, ອັດຕະປື 05 ບໍ່)
- ສໍາເລັດການກໍ່ສ້າງວິດຖ່າຍ 500 ໜ່ວຍ.

* ໂຄງການນໍ້າສະອາດໂດຍການຮ່ວມມືກັບກາແດງອົດສະຕາລີ ມູນຄ່າ 50.000 ກີບ.
- ສໍາເລັດການກໍ່ສ້າງນໍ້າລິນ 06 ແຫ່ງ ມູນຄ່າ 32.000 ໂດລາ.
- ສໍາເລັດການກໍ່ສ້າງວິດຖ່າຍ ຈໍານວນ 270 ໜ່ວຍ ມູນຄ່າ 4.860 ໂດລາ.
- ກໍ່ສ້າງອາສາສະໝັກ ແລະ ອົບຮົມ ຈໍານວນ 20 ຄົນ.

* ໂຄງການຮ່ວມມືກັບກາແດງເນເທີແລນ: ໃຊ້ງົບປະມານ 91.000 ໂດລາ.
- ສະໜອງລົດກະບະ 03 ຄັນ, ລົດຈັກ 06 ຄັນ, ຄອມພິວເຕີ 03 ໜ່ວຍ, ໂທລະສັບ/ແຟັກ 07 ໜ່ວຍ.
- ຄັດເລືອກບ້ານເປົ້າໝາຍ 18 ບ້ານ, ດໍາເນີນກິດຈະກໍາ ສໍາຫລວດຂໍ້ມູນ 18 ບ້ານ, ຝຶກອົບຮົມ ອສບ 36 ຄົນ.

* ໂຄງການ ຮສຂ ກາແດງລາວ-ແດນມາກ: ມູນຄ່າໃຊ້ຈ່າຍກິດຈະກຳທັງໝົດ 1.121.000 ໂດລາ, ຈຳນວນບ້ານເປົ້າໝາຍທັງໝົດ 61 ບ້ານ.

**+ ວຽກງານສາທາລະນະສຸກ:**

- ສຳເລັດການກໍ່ສ້າງນ້ຳລິນ 08 ແຫ່ງ, ສ້ອມແປງ 01 ແຫ່ງ
- ສຳເລັດການກໍ່ສ້າງວິດຖ່າຍໃຫ້ຊາວບ້ານ ແລະ ໂຮງຮຽນ ຈຳນວນ 300 ໜ່ວຍ
- ອົບຮົມ ອສບ ໃໝ່ 138 ຄົນ, ອົບຮົມຄືນ ອສບ ເກົ່າ 126 ຄົນ
- ທົດແທນຖົງຢາ ຈຳນວນ 126 ຊຸດ
- ສ້າງ ແລະ ອົບຮົມໝໍຕຳແຍເກົ່າ ແລະ ໃໝ່ ຈຳນວນ 49 ຄົນ
- ຈັດຕັ້ງວັນສົ່ງເສີມສຸຂະພາບ ແລະ ວັນໂພສະນາການຊຸມຊົນ ແນວລະ 6 ຄັ້ງ
- ສະໜອງມຸ້ງຍ້ອມຢາໃຫ້ປະຊາຊົນບ້ານເປົ້າໝາຍ ໃນໂຄງການ 8.000 ດາງ
- ສຳຫລວດ ແລະ ເກັບກຳຂໍ້ມູນກອງທຶນໝູນວຽນໃນໂຄງການ
- ກໍ່ສ້າງສຸກສາລາ 02 ແຫ່ງ
- ສະໜອງອຸປະກອນການແພດຄົບຊຸດ ແລະ ຝຶກອົບຮົມພະນັກງານແພດ ແລະ ພະຍາບານໃຫ້ແກ່ສຸກສາລາ ຈຳນວນ 04 ຄົນ

**+ ຂະແໜງການສຶກສາ:**

- ສຳເລັດການກໍ່ສ້າງໂຮງຮຽນປະຖົມແບບຖາວອນ ຈຳນວນ 13 ຫລັງ
- ສະໜອງອຸປະກອນການຮຽນ-ການສອນ ໃຫ້ນັກຮຽນ, ຄູ ແລະ ໂຮງຮຽນ
- ອົບຮົມຄູນອກລະບົບ ຈຳນວນ 27 ຄົນ
- ອົບຮົມວິຊາຊີບໃຫ້ຄູນອກລະບົບ 10 ຄົນ
- ອົບຮົມການບໍລິຫານໂຮງຮຽນປະຖົມ 23 ຄົນ
- ອົບຮົມຄູລະບົບ 11+1 ຈຳນວນ 18 ຄົນ
- ອົບຮົມການນຳໃຊ້ຖົງຢາພະຍາບານໃຫ້ຄູປະຖົມ ຈຳນວນ 20 ທ່ານ

**+ ຂະແໜງເສດຖະກິດ: ງົບປະມານ 330.731.000 ກີບ**

- ທັດສະນະສຶກສາ ພາຍໃນປະເທດ 03 ຄັ້ງ, ຕ່າງປະເທດ 01 ຄັ້ງ
- ຝຶກອົບຮົມສິນເຊື່ອ 05 ຄັ້ງ, ອົບຮົມການລ້ຽງສັດ ແລະ ເຜີຍແຜ່ໄຂ້ຫວັດສັດປີກ 5 ເທື່ອ
- ຈັດການເຜີຍແຜ່ບົດບາດຍິງ-ຊາຍ ໃຫ້ແກ່ບ້ານເປົ້າໝາຍຂອງໂຄງການໃນ 3 ເມືອງ 21 ບ້ານ.
- ສຶກສາບ້ານ ສ້າງກຸ່ມພັດທະນາແມ່ຍິງບ້ານໃໝ່ ແລະ ສະໜອງອຸປະກອນຈຳນວນ 10 ບ້ານ.
- ປ່ອຍເງິນກູ້ໃຫ້ກຸ່ມພັດທະນາແມ່ຍິງບ້ານ ຈຳນວນ 8 ບ້ານ.
- ຕິດຕາມກອງທຶນຂອງກຸ່ມພັດທະນາແມ່ຍິງບ້ານ.
- ທີມງານເສດຖະກິດ ແລະ ແມ່ຍິງເມືອງ ທົວເມືອງ ມາຂາຍເຄື່ອງຫັດຖະກຳທີ່ບຸນພະທາດ ຫລວງ.

3.2.4. ວຽກງານບໍລິຈາກເລືອດ.

1). ການປຸກລະດົມຮັບບໍລິຈາກເລືອດ

1.1). ວຽກງານຮັບບໍລິຈາກເລືອດ:

+ ຮັບເລືອດທັງໝົດ: ໄດ້ຮັບເລືອດ 12.365 ຖົງ

- ຮັບຈາກໜ່ວຍເຄື່ອນທີ່ = 7.239 ຖົງ
- ຮັບພາຍໃນສູນ = 2.295 ຖົງ

+ ຈັດໂຄສະນາໃຫ້ຄວາມຮູ້ດ້ານການບໍລິຈາກເລືອດແຍຍກັບທີ່, ອອກອາກາດທາງວິທະຍຸ ແລະ ອອກໜັງສືພິມທັງໝົດ 905 ເທື່ອ.

+ ໄດ້ຈັດກອງປະຊຸມສະຫລຸບການເຄື່ອນໄຫວຮັບບໍລິຈາກເລືອດປີ 2006 ແລະ ວາງແຜນປີ 2007 ກັບພາກສ່ວນ:

- ແຂວງວຽງຈັນ
- ແຂວງບໍລິຄຳໄຊ
- ກະຊວງປ້ອງກັນຊາດ ປ້ອງກັບຄວາມສະຫງົບ
- ທຸລະກິດ, ພາກສ່ວນສື່ມວນຊົນ, ບັນດາກະຊວງຕ່າງໆ
- ອົງການພຸດທະສາດສະໜາ
- ສຶກສາວິທະຍາໄລພາກລັດ
- ສຶກສາວາຍມະຫາວິທະຍາໄລ ແລະ ວິທະຍາໄລພາກເອກະຊົນ

1.2). ວຽກງານການກວດວິເຄາະທົດລອງ:

- ກວດໝວດເລືອດ ABO = 21.565 ເທື່ອ
- ກວດໝວດເລືອດ Rhesus = 12.921 ເທື່ອ
- ກວດພະຍາດນຳສົ່ງທາງເລືອດ = 8.572 ເທື່ອ
- ທົດລອງເລືອດເຂົ້າກັນ = 12.287 ເທື່ອ
- ກວດຊອກຫາອັງຕີກໍ = 32 ກໍລະນີ
- ກວດຈຳແນກເບິ່ງອັງຕີກໍ = 12 ກໍລະນີ
- ແຕ່ງເມັດເລືອດແດງມາດຕະຖານ = 22
- ແຕ່ງເມັດເລືອດແດງ Coomb Comtrot = 15
- ກວດກາຄຸນນະພາບທາງດ້ານໝວດເລືອດຈາກພາຍນອກ = 3
- ກວດກາຄຸນນະພາບພານໃນ = 2

1.3). ວຽກງານເກັບຮັກສາເບີກຈ່າຍເລືອດ ແລະ ອົບຮົມ:

* ຈ່າຍເລືອດໃຫ້ໂຮງໝໍຕ່າງໆ ທັງໝົດ = 8.358 ຖົງ

- ໂຮງໝໍມະໂຫສົດ = 2.414 ຖົງ
- ໂຮງໝໍເສດຖາ = 1.742 ຖົງ
- ໂຮງໝໍມິດຕະພາບ = 2.028 ຖົງ

| | | |
|---|---|---|
| - ໂຮງໝໍ 103 | = | 1.339 ຖົງ |
| - ໂຮງໝໍແມ່ແລະເດັກ | = | 221 ຖົງ |
| - ໂຮງໝໍແຂວງວຽງຈັນ | = | 359 ຖົງ |
| - ໂຮງໝໍແຂວງບໍລິຄຳໄຊ | = | 73 ຖົງ |
| - ໂຮງໝໍແຂວງຊຽງຂວາງ | = | 44 ຖົງ |
| - ໂຮງໝໍອື່ນໆ | = | 139 ຖົງ |
| - ຈ່າຍນະໂຍບາຍຄືນເລືອດ ໃຫ້ແກ່ຜູ້ບໍລິຈາກ | = | 788 ຖົງ |
| - ຈ່າຍນະໂຍບາຍລ້າ | = | 52 ຖົງ |
| * ສະເໜີຂໍຈາກໂຮງໝໍ | = | 10.482 ຖົງ |

**1.4). ວຽກງານການຕິດຕາມຊຸກຍູ້:**

- ລົງຕິດຕາມຊຸກຍູ້ວຽກງານການບໍລິການເລືອດຢູ່ 11 ສາຂາແຂວງຊຽງຂວາງ, ຫົວພັນ, ຫລວງພະບາງ, ໄຊຍະບູລີ, ອຸດົມໄຊ, ບໍ່ແກ້ວ, ອັດຕະປື, ສາລະວັນ, ຈຳປາສັກ, ສະຫວັນນະເຂດ ແລະ ຄຳມ່ວນ.
- ອົບຮົມກ່ຽວກັບການປຸກລະດົມຈັດຫາເລືອດ, ການວິເຄາະ, ການເກັບຮັກສາເລືອດ, ການຄຸ້ມຄອງຄຸນນະພາບ ແລະ ການນຳໃຊ້ເລືອດສົມເຫດສົມຜົນໃຫ້ແກ່ສາຂາແຂວງຊຽງຂວາງ, ຫົວພັນ, ອັດຕະປື ແລະ ເຊກອງ.
- ໄດ້ແຈກຢາຍອຸປະກອນ ແລະ ນ້ຳຢາທີ່ຈຳເປັນສຳລັບວຽກງານເລືອດໃຫ້ແກ່ 11 ສາຂາແຂວງ.
- ໄດ້ມອບລົດຕູ້ວິຊາການໃຫ້ແຂວງຊຽງຂວາງ 1 ຄັນ ແລະ ແຂວງອັດຕະປື 1 ຄັນ.

**1.5). ວຽກງານພົວພັນພາຍນອກ.**

- ພະນັກງານ 2 ທ່ານ ໄປຮ່ວມອົບຮົມສຳມະນາດ້ານການປຸກລະດົມເລືອດ ທີ່ປະເທດ ມຽນມາ ຈັດໂດຍສະຫະພັນກາແດງ.
- ໄດ້ຈັດສົ່ງອາສາສະໝັກບໍລິຈາກເລືອດຫລາຍເທື່ອ ຈຳນວນ 2 ທ່ານ ໄປເຂົ້າຮ່ວມສະຫລອງວັນຜູ້ບໍລິຈາກເລືອດ ຂົງເຂດອາຊີຕາເວັນອອກສ່ຽງໃຕ້.
- ໄດ້ຮັບລົດ ຈຳນວນ 4 ຄັນເພື່ອວຽກງານເລືອດປອດໄພ ຈາກກອງທຶນໂລກ.

**3.2.5. ວຽກງານຂົນຂວາຍ-ການກຸສົນ:**

**1) ວຽກງານໂຄສະນາ-ຂ່າວສານ:**

- ໄດ້ໄປຊຸກຍູ້ວຽກໂຄສະນາຢູ່ແຂວງຜົ້ງສາລີ, ຫົວພັນ, ຊຽງຂວາງ ແຂວງລະໜຶ່ງຄັ້ງ.
- ໄດ້ໄປຈັດຕັ້ງໂຄສະນາເຜີຍແຜ່ຢູ່ແຂວງວຽງຈັນ ທີ່ເມືອງຮົມ ແລະ ເມືອງໄຊສົມບູນ.
- ໄດ້ເປີດກອງປະຊຸມທົບທວນຄືນວຽກງານໂຄສະນາໃຫ້ແກ່ພະນັກງານໂຄສະນາໃນທົ່ວປະເທດ ໃນວັນທີ 21-22/12/2006.

- ໄດ້ຈັດພິມວາລະສານ 8.800 ສະບັບ, ພິມແປນພັບກາແດງ 10.000 ໃບ, ເຄື່ອງໝາຍກາແດງ 3.400 ໃບ, ພິມທຸງ ICRC, IFRC, LRC 57 ຜືນ
- ໄດ້ຂຽນຂ່າວການເຄື່ອນໄຫວຕ່າງໆຂອງກາແດງ ທີ່ສຳຄັນ 28 ບົດໃຫ້ໜັງສືພິມ: ໜັງສືພິມວຽງຈັນໃໝ່, ໜັງສືພິມວຽງຈັນທາມວັນອາທິດ, ໜັງສືພິມປະເທດລາວ ແລະ ໜັງສືພິມປະຊາຊົນ.
- ສົ່ງຂ່າວອອກໂທລະພາບ 05 ຄັ້ງ, ອອກຂ່າວທາງວິທະຍຸກະຈາຍສຽງ 07 ຄັ້ງ, ໂປສເຕີ 7 ຫລັກການ 29 ຊຸດ, ສົນທິສັນຍາ-ອານຸສັນຍາ 105 ຊຸດ, ປື້ມເປີດໂລກສູ່ ICRC 2.125 ຫົວ
- ພາແຂກ ICRC ໄປເອົາຂໍ້ມູນເລື່ອງນ້ຳ ຢູ່ເມືອງຮົມ ແລະ ເມືອງໄຊສົມບູນ 3 ເທື່ອ ເພື່ອຈະໃຫ້ການຊ່ວຍເຫລືອໂຄງການນ້ຳສະອາດຂະໜາດນ້ອຍ ໃຫ້ແກ່ເຂດທີ່ຢູ່ຫ່າງໄກສອກຫລີກ.
- ໄດ້ພາແຂກໄປປະສານງານກັບກາແດງແຂວງສະຫວັນນະເຂດ ແລະ ຈຳແສສັກ ກ່ຽວກັບວຽກງານອົງຄະທຽມ ທີ່ທາງສູນອົງຄະທຽມກໍ່ຄືແຂວງ ຢາກໃຫ້ກາແດງສາຂາແຂວງມີສ່ວນຮ່ວມໃນວຽກງານດັ່ງກ່າວ.
- ໄດ້ປະສານງານກັບກະຊວງປ້ອງກັນຊາດ ເວົ້າເລື່ອງການເຜີຍແຜ່ກົດໝາຍມະນຸດສະທຳສາກົນ ແກ່ກຳລັງປະກອບອາວຸດ ໂດຍສະເພາະແມ່ນກົດໝາຍສູ້ຮົບ, ໄດ້ເວົ້າເຖິງການແປເອກະສານຕ່າງໆເປັນຄູ່ມືໃນການເຜີຍແຜ່.
- ໄດ້ປະສານງານກັບກະຊວງການຕ່າງປະເທດ ເວົ້າເຖິງການຈັດຕັ້ງປະຕິບັດສົນທິສັນຍາ ແລະ ອານຸສັນຍາ ໂດຍສະເພາະແມ່ນການໄປຢ້ຽມຢາມຜູ້ຕ້ອງຫາ (ສະເລີຍເສິກ)
- ໄດ້ພາແຂກ ICRC, ກະຊວງການຕ່າງປະເທດ ແລະ ກາແດງລາວ ໄປຢ້ຽມຢາມຜູ້ຕ້ອງຫາເປັນຜົນສຳເລັດ ໃນວັນທີ 14/11/2006.
- ໄດ້ປະສານງານກັບກາແດງສາຂາແຂວວຽງຈັນ ກ່ຽວກັບການຊ່ວຍເຫລືອບັນເທົາທຸກແກ່ປະຊາຊົນຜູ້ຍົກຍ້າຍຖິ່ນຖານມາໃໝ່ ບໍ່ມີບ່ອນຢູ່ອາໃສ.

**2) ວຽກງານຊອກຫາແຫລ່ງທຶນ:**

- ລາຍໄດ້ຈາກການຈັດງານຫາລາຍໄດ້  19.106.000 ກີບ, 3.000 ບາດ (ຈາກການຂາຍຫວຍ, ງານລາຕີ)
- ໄດ້ຮັບເງິນຈາກຫີບບໍລິຈາກ:
  - ເງິນກີບ 322.095.500 ກີບ
  - ເງິນດອນລາ 61 ໂດລາ
  - ເງິນບາດ 12.475 ບາດ
- ໄດ້ຈາກການໃຫ້ເຊົ່າບ້ານ 17.760.000 ກີບ, 1.800 ໂດລາ
- ຈາກການບໍລິການຮົມຢາ, ນວດແຜນບູຮານ, ສູນຫັດກາຍ 99.196.500 ກີບ
- ຈາກການຂາຍເຄື່ອງ 427.812.000 ກີບ

**3) ວຽກງານສືບຫາວຫາຍາດຕິພີ່ນ້ອງທີ່ສູນຫາຍ**

- ໄດ້ຮັບຈົດໝາຍສືບຫາວຫາຍາດພີ່ນ້ອງຈາກສະພາກາແດງ 2 ສະບັບ, ຈາກປະເທດກຳປູເຈຍ 3 ສະບັບ ເພື່ອສືບຫາວຫາຍາດພີ່ນ້ອງຢູ່ເມືອງໂຂງ, ແຂວງຈຳປາສັກ.

- ໄດ້ຮັບຈົດໝາຍຈາກແຂວງຊຽງຂວາງ 1 ສະບັບ ເລື່ອງສືບຫາວຫາລູກສາວທີ່ເກີດຢູ່ໂຮງໝໍໂອບີ 1984 (ຫລົງລູກຢູ່ໂຮງໝໍ)

**4) ວຽກງານຊາວໜຸ່ມອາສາສະໝັກ**

- ໄດ້ສາທິດກ່ຽວກັບການຊ່ວຍເຫລືອດ້ານປະຖົມພະຍາບານໃຫ້ຊາວໜຸ່ມຈຳນວນ 26 ຄົນ ອອກເຄື່ອນໄຫວຮັບໃຊ້ບຸນປະເພນີຕ່າງໆ.

**3.2.6. ໂຄງການເບິ່ງແຍງຜູ້ອາຍຸສູງ**

- ໂຄງການເບິ່ງແຍງຜູ້ອາຍຸສູງ ໄລຍະ II ໄດ້ເຄື່ອນໄຫວປະຕິບັດກິດຈະກຳໃນການຕິດຕາມການເຄື່ອນໄຫວກິດຈະກຳຂອງອາສາສະໝັກ ແລະ ຈັດງານພົບປະສ້າງສັນລະຫວ່າງຜູ້ອາຍຸສູງ, ຜູ້ເບິ່ງແຍງ, ອາສາສະໝັກ ແລະ ອຳນາດການປົກຄອງ ໃນ 7 ບ້ານເປົ້າໝາຍເມືອງໄຊທານີ ນະຄອນຫລວງວຽງຈັນ.
- ເພື່ອປະຕິບັດກິດຈະກຳຂອງໂຄງການໃນການເບິ່ງແຍງດ້ານສັງຄົມຂອງຜູ້ອາຍຸສູງ ເຊິ່ງໃນນັ້ນການຈັດງານພົບປະສັງສັນກໍ່ແມ່ນກິດຈະກຳໜຶ່ງທີ່ສຳຄັນ ເພື່ອພັດທະນາດ້ານແນວຄິດຈິດໃຈຂອງຜູ້ອາຍຸສູງ.
- ເພື່ອໃຫ້ຜູ້ອາຍຸສູງ, ຜູ້ເບິ່ງແຍງ, ອາສາສະໝັກ ແລະ ອຳນາດການປົກຄອງມີໂອກາດພົບປະແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໃນການດຳລົງຊີວິດປະຈຳວັນ.
- ເພື່ອລົງຕິດຕາມການເຄື່ອນໄຫວກິດຈະກຳຂອງອາສາສະໝັກໃນການປະຕິບັດກິດຈະກຳການດູເລເບິ່ງແຍງຜູ້ອາຍຸສູງທີ່ຕົນຮັບຜິດຊອບ.

**ການລົງເຄື່ອນໄຫວກິດຈະກຳແຕ່ລະບ້ານ ແລະ ຈຳນວນພົນທີ່ເຂົ້າຮ່ວມ:**

- ໄຊສົມບູນ ມີຜູ້ອາຍຸສູງ 10 ຄົນ, ຍິງ 6 ຄົນ, ຜູ້ເບິ່ງແຍງ 13 ຄົນ, ຍິງ 11 ຄົນ, ອາສາສະມັກ 1 ຄົນ, ອຳນາດການປົກຄອງ 2 ຄົນ.
- ໂຄກນ້ອຍ ມີຜູ້ອາຍຸສູງ 9 ຄົນ, ຍິງ 6 ຄົນ, ຜູ້ເບິ່ງແຍງ 9 ຄົນ, ຍິງ 8 ຄົນ, ອຳນາດການປົກຄອງ 2 ຄົນ.
- ໜອງບົວ ມີຜູ້ອາຍຸສູງ 5 ຄົນ, ຍິງ 3 ຄົນ, ຜູ້ເບິ່ງແຍງ 9 ຄົນ, ຍິງ 8 ຄົນ, ອຳນາດການປົກຄອງ 1 ຄົນ.
- ໂພນໄຮຄຳ ມີຜູ້ອາຍຸສູງ 4 ຄົນ, ຍິງ 4 ຄົນ, ຜູ້ເບິ່ງແຍງ 4 ຄົນ, ຍິງ 3 ຄົນ, ອາສາສະມັກ 1 ຄົນ, ອຳນາດການປົກຄອງ 2 ຄົນ.
- ໂພນໂຮງ ມີຜູ້ອາຍຸສູງ ....... ຄົນ, ຍິງ .......... ຄົນ, ຜູ້ເບິ່ງແຍງ 2 ຄົນ, ຍິງ 1 ຄົນ, ອຳນາດການປົກຄອງ 2 ຄົນ, ຍິງ 2 ຄົນ.
- ໂນນສະອາດ ມີຜູ້ອາຍຸສູງ 5 ຄົນ, ຍິງ 5 ຄົນ, ຜູ້ເບິ່ງແຍງ 5 ຄົນ, ຍິງ 3 ຄົນ.
- ສຳບອນ ມີຜູ້ອາຍຸສູງ 10 ຄົນ, ຍິງ 7 ຄົນ, ຜູ້ເບິ່ງແຍງ 10 ຄົນ, ຍິງ 4 ຄົນ, ອຳນາດການປົກຄອງ 12 ຄົນ, ຍິງ 7 ຄົນ

ລວມຜູ້ອາຍຸສູງ 43 ຄົນ, ຍິງ 31 ຄົນ, ຜູ້ເບິ່ງແຍງ 48 ຄົນ, ຍິງ 33 ຄົນ, ອາສາສະໝັກ 2 ຄົນ, ອ◌ໍານາດການປົກຄອງ 21 ຄົນ, ຍິງ 7 ຄົນ.

- ກິດຈະກໍາທີ່ໄດ້ປະຕິບັດມີດັ່ງນີ້: ກ່ອນຈະລົງໄປແຕ່ລະຄັ້ງ, ທີມງານໄດ້ຕຽມອາຫານ, ຂອງຫວານ ແລະ ນ້ໍາດື່ມໄປພ້ອມ, ໄປຮອດແຕ່ລະຈຸດໄດ້ເຕົ້າໂຮມອໍານາດການປົກຄອງບ້ານ, ອົງການຈັດຕັ້ງມະຫາຊົນ, ຜູ້ອາຍຸສູງ, ຜູ້ເບິ່ງແຍງ ແລະ ອາສາສະໝັກ ເພື່ອໃຫ້ພວກເພິ່ນພົບປພສັງສັນກັນ ພ້ອມກັນນັ້ນ ຕ່າງໜ້າໃຫ້ທີມງານເບິ່ງແຍງຜູ້ອາຍຸສູງກໍ່ໄດ້ສະຫລຸບຄືນຈຸດດີ-ຈຸດອ່ອນໃນການປະຕິບັດກິດຈະກໍາຂອງໂຄງການໃນໄລຍະຜ່ານມາ, ຈາກນັ້ນກໍ່ສະແດງຄໍາຄິດເຫັນເຊິ່ງກັນ ແລະ ກັນ, ນອກນັ້ນ ກໍ່ໄດ້ຮ່ວມຮັບປພທານອາຫານນໍາກັນຈົນປິດພິທີ.
- ບັນດາອໍານາດການປົກຄອງກໍ່ຄືບັນດາທ່ານທີ່ໄດ້ເຂົ້າຮ່ວມໃນພິທີດັ່ງກ່າວ ຕ່າງກໍ່ມີຄວາມດີອົກດີໃຈ ແລະ ຍ້ອງຍໍຊົມເຊີຍນໍາການຈັດຕັ້ງພັກ-ລັດຂັ້ນເທິງ, ໂດຍສະເພາະແມ່ນໂຄງການເບິ່ງແຍງຜູ້ອາຍຸສູງ ເຊິ່ງຍາມໃດກໍ່ເປັນຫ່ວງນໍາພໍ່ແມ່ປະຊາຊົນ ໂດຍສະເພາະແມ່ນແນວທາງນະໂຍບາຍໃນການເບິ່ງແຍງຜູ້ອາຍຸສູງ.

## IV. <u>ພາກຕີລາຄາ</u>

### 4.1. <u>ດ້ານດີ</u>

- ຍ້ອນມີດໍາລັດເລກທີ 367ນຍເປັນບ່ອນອີງໃນການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຂອງອົງການກາແດງລາວ.
- ຍ້ອນອົງການກາແດງລາວສູນກາງ ແລະ ອໍານາດການປົກຄອງແຕ່ລະຂັ້ນໄດ້ໃຫ້ການຊີ້ນໍາ ແລະໃຫ້ການຮ່ວມມືໃນການເຄື່ອນໄຫວວຽກງານຂອງອົງການກາແດງລາວ.
- ຍ້ອນອົງການກາແດງລາວ, ສະຫະພັນກາແດງສາກົນ ແລະກາແດງປະເທດເພື່ອນມິດໃຫ້ການອູ້ມຊູ ແລະໃຫ້ການສະໜັບສະໜູນໃນການເຄື່ອນໄຫວກິດຈະກໍາຕ່າງໆ.
- ບັນດາອົງການຈັດຕັ້ງ ພາກລັດ, ເອກະຊົນ, ອົງການນຈັດຕັ້ງສາກົນ, ນັກຮຽນຮູ້ນັກປັນຍາຊົນຕະຫຼອດເຖິງພໍ່ແມ່ປະ ຊາຊົນ ກໍ່ໄດ້ປະກອບສ່ວນຮ່ວມມືເຄື່ອນໄຫວວຽກງານຂອງອົງການກາແດງລາວຢ່າງຕັ້ງໜ້າ.
- ຍ້ອນຄວາມຕັດສິນໃຈສູງຂອງພະນັກງານອົງການກາແດງລາວໃນການປະກອບ ສ່ວນເຂົ້າໃນທຸກວຽກງານ.
- ຍ້ອນການຮ່ວມມື, ການເຂົ້າອົກເຂົ້າໃຈ ແລະ ຄວາມສໍາພັນທີ່ດີຂອງບັນດາກາແດງເພື່ອນມິດໄດ້ມີຄວາມສົນໃຈຫຼາຍຂຶ້ນໃນການຮ່ວມມືຊ່ວຍເຫຼືອອົງການກາແດງລາວ. ອັນທີ່ພົ້ນເດັ່ນໃນປີ2006 ນີ້ແມ່ນພວກເຮົາມີການສ້າງຕັ້ງລະບົບບັນຊີໃໝ່ໃນການກໍານົດນໍາໃຊ້ງົບປະມານທີ່ໄດ້ຮັບການສະໜັບສະໜູນຈາກກາແດງປະເທດສະວິດເຊີແລນ, ຈາກການຫາລາຍໄດ້ຈາກແຫຼ່ງລາຍຮັບອື່ນໆ.

### 4.2 ຂໍ້ຄົງຄ້າງ

- ການສະໜອງງົບປະມານການເງິນບໍ່ທັນຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນການເຄື່ອນໄຫວກິດຈະກຳຕ່າງໆ.
- ການບັນຈຸພະນັກງານເຂົ້າໃນຕຳແໜ່ງງານຕ່າງໆຍັງບໍ່ທັນພຽງພໍເຊັ່ນ: ບາງຕຳແໜ່ງກໍ່ຂາດພະນັກງານຮັບຜິດຊອບ, ໂດຍສະເພາະແມ່ນພະນັກງານດ້ານວິຊາການ ແລະ ພະນັກງານດ້ານບໍລິຫານຄຸ້ມຄອງ
- ບັນຫາໃນການເຄື່ອນໄຫວວຽກງານກາແດງຂອງພະນັກງານຍັງຂາດປະສົບການດ້ານວິຊາສະເພາະຍ້ອນລະດັບຄວາມຮູ້ຄວາມສາມາດມີຂີດຈຳກັດບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່, ພາສາຕ່າງປະເທດຍັງຈຳກັດ
- ສຳລັບກາແດງສາຂາແຂວງທີ່ຂາດການອູ້ມຊູຈາກກາແດງເພື່ອນມິດ ໃນການເຄື່ອນໄຫວກິດຈະກຳແລະການພັດທະນາສາຂາແມ່ນຊັກຊ້າຍ້ອນຂາດງົບປະມານສະໜັບສະໜູນຈາກລັດ ແລະ ອຳນາດການປົກຄອງທ້ອງຖິ່ນ.
- ບາງກິດຈະກຳແມ່ນດຳເນີນໄປດ້ວຍຄວາມຫຍຸ້ງຍາກເປັນຕົ້ນແມ່ນວຽກງານຈັດຫາຜູ້ບໍລິຈາກເລືອດຍ້ອນຄວາມເຂົ້າໃຈຂອງອົງການປົກຄອງແລະ ປະຊາຊົນສ່ວນຫຼາຍບໍ່ທັນເຂົ້າໃຈເລິກເຊິ່ງຕໍ່ວຽກງານດັ່ງກ່າວຈຶ່ງເຮັດໃຫ້ການບໍລິຈາກເລືອດບໍ່ໄດ້ຕາມເປົ້າໝາຍ ແລະ ຕໍ່ເນື່ອງ.
- ການປະຕິບັດນະໂຍບາຍຕໍ່ອາສາສະໝັກຕ່າງໆຍັງບໍ່ທັນມີລະບຽບຫຼັກການນຳໃຊ້ເທື່ອສະນັ້ນຈຶ່ງເຮັດໃຫ້ຄວາມເປັນເຈົ້າຂອງວຽກງານຂອງ ອສບ ບໍ່ໄດ້ຕາມຄາດໝາຍ.

### 4.3 ບາງບັນຫາທີ່ຖອດຖອນໄດ້:

- ຈາກຈຸດດີແລະຈຸດອ່ອນທີ່ກ່າວມາຂ້າງເທິງນັ້ນພວກເຮົາສາມາດຖອດຖອນບັນຫາໄດ້ດັ່ງລຸ່ມນີ້:
- ຕ້ອງເພີ່ມທະວີບົດບາດການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດເຂົ້າໃນວຽງານຂອງອົງການກາແດງລາວຢ່າງໜັກແໜ້ນ ແລະ ເລິກເຊິ່ງ.
- ສືບຕໍ່ຜັນຂະຫຍາຍດຳລັດ 36/ນຍ ໃຫ້ເປັນອັນລະອຽດໃນແຕ່ລະດ້ານພ້ອມທັງປັບປຸງແບບແຜນວິທີເຮັດວຽກໃຫ້ສອດຄ່ອງກັບສະພາບຕົວຈິງ.
- ປັບປຸງອົງການຈັດຕັ້ງໃຫ້ຄົບຊຸດເຊັ່ນ: ຄະນະກຳມະການ, ອະນຸກຳມະການຂັ້ນຕ່າງໆທີ່ມີຄວາມຈຳເປັນແຕ່ສູນກາງລົງຮອດທ້ອງຖິ່ນ.
- ປັບປຸງບັນຈຸສັບຊ້ອນພະນັກງານເຂົ້າໃນຕຳແໜ່ງຕ່າງໆໃຫ້ພຽງພໍກັບຄວາມຕ້ອງການຕົວຈິງ.
- ເອົາໃຈໃສ່ຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານໃຫ້ສູງເຊັ່ນ: ດ້ານທິດສະດີການເມືອງ, ດ້ານວິຊາສະເພາະ ແລະ ພາສາຕ່າງປະເທດເພື່ອຮັບຮອງ ແລະນຳເອົາເທັກໂນໂລຊີອັນໃໝ່ເຂົ້າໃນການພັດທະນາວຽກງານຂອງອົງການກາແດງລາວ.
- ເອົາໃຈໃສ່ຍາດແຍ່ງການຊ່ວຍເຫຼືອຈາກສາກົນຕ່າງໆ ເພື່ອພັດທະນາວຽກງານຂອງກາແດງໃຫ້ມີຄວາມເຂັ້ມແຂງໃນທຸກດ້ານ.
- ການປະຕິບັດນະໂຍບາຍຕໍ່ພະນັກງານທີ່ເຮັດວຽກນຳແຕ່ລະໂຄງການທີ່ໃຫ້ການຊ່ວຍເຫຼືອແກ່

ອົງການກາແດງລາວຄວນເຮັດໃຫ້ເປັນເອກະພາບກັນ ແລະ ມີລະບຽບການຄຸ້ມຄອງທີ່ເໝາະສົມ

- ກິດຈະກຳໃນການຊອກຫາແຫຼ່ງທຶນຄວນໄດ້ຮັບການປັບປຸງທາງດ້ານປະລິມານ ແລະ ຄຸນນະພາບເພື່ອໃຫ້ເປັນທີ່ຍອມຮັບຂອງສັງຄົມ.

## ພາກສະເໜີ:

* ບັນດາຂໍ້ສະເໜີແນະ:

1. ສະເໜີຂັ້ນເທິງແບ່ງທຶນໃນການຍົກລະດັບດ້ານທິດສະດີ, ວິຊາສະເພາະ ແລະ ທັດສະນະສຶກສາຢູ່ພາຍໃນປະເທດ ແລະ ຕ່າງປະເທດດ້ວຍທຶນຂອງລັດຖະບານ.
2. ສະເໜີໃຫ້ລັດຖະບານເພີ່ມງົບປະມານເຂົ້າໃນວຽກງານຂອງກາແດງໃຫ້ຫຼາຍຂຶ້ນກ່ວາເກົ່າເພື່ອສະດວກໃນການເຄື່ອນໄຫວວຽກງານໂດຍສະເພາະແມ່ນເພີ່ມງົບປະມານເຂົ້າໃນວຽກງານການຈັດຫາຜູ້ບໍລິຈາກເລືອດ ແລະ ການສະໜອງເລືອດທີ່ປອດໄພ, ວຽກງານການຊ່ວຍເຫຼືອບັນເທົາທຸກຕໍ່ຜູ້ທີ່ໄດ້ຮັບເຄາະຮ້າຍຈາກໄພພິບັດຕ່າງໆ ແລະ ວຽກງານສົ່ງເສີມສຸຂະພາບຊຸມຊົນ.
3. ສະເໜີລັດຖະບານດຸ່ນດ່ຽງໂກຕ້າພະນັກງານເພີ່ມຕື່ມເຂົ້າໃນບັນດາຕຳແໜ່ງງານຕ່າງໆທີ່ມີຄວາມຈຳເປັນຂອງອົງການກາແດງລາວໃນທົ່ວປະເທດຢ່າງໜ້ອຍໃຫ້ໄດ້ 6 – 7 ຄົນຕໍ່ປີ.
4. ສະເໜີຂັ້ນເທິງຄົ້ນຄ້ວາພິຈາລະນາສືບຕໍ່ການປະກອບຄຳເຫັນໃສ່ຮ່າງດຳລັດວ່າດ້ວຍການຂົນຂວາຍຊອກຫາແຫຼ່ງທຶນຂອງອົງການກາແດງລາວທີ່ຍັງບໍ່ທັນໄດ້ຮັບຮອງ ແລະ ການຈັດຕັ້ງປະຕິບັດ.
5. ສະເໜີຂັ້ນເທິງຄົ້ນຄ້ວາພິຈາລະນາຮ່າງທຳມະນູນຂອງກາແດງລາວ.

## ພາກສະຫຼຸບງົບປະມານ

### I. ງົບປະມານຂອງລັດຖະບານ (ກີບ)

| | ຮັບ | ຈ່າຍຜ່ານຄັງເງິນ | ເງິນຍັງເຫຼືອ | ໝາຍເຫດ |
|---|---|---|---|---|
| 1. ລາຍຈ່າຍຄັງ ເງິນເດືອນ | 333.000.000 | 309.777.600 | 23.222.400 | |
| 2 ເງິນອຸດໜູນ, ເງິນນະໂຍບາຍ | 52.000.000 | 23.249.443 | 28.750.557 | |
| 3. ລາຍຈ່າຍຮັບໃຊ້ກົງຈັກບໍລິຫານ | 475.000.000 | 413.438.599 | 61.561.401 | |
| 4. ລາຍຈ່າຍດັດສົມ ແລະ ສົ່ງເສີມ | 100.000.000 | 28.386.000 | 71.614.000 | |
| 5. ລາຍຈ່າຍສ້ອມແປງ | 30.000.000 | 29.622.505 | 377.495. | |
| 6. ລາຍຈ່າຍໃນການລົງທຶນຂອງລັດ | 500.000.000 | 478.591.337 | 21.408.663 | |
| ລວມ | 1.490.000.000 | 1. 283.065.484 | 206.934.516 | |

## ການສະໜັບສະໜູນ ຈາກສາກົນ ປີ 2006

**# ຜູ້ໃຫ້ທຶນຊ່ວຍເຫລືອຈາກກາແດງ: DRC, NLRC, ARC, FRC, SRC, IFRC, ICRC (ສໍາລັບ CAS Process ປີ 2006 ໃນວຽກງານ ສ້າງຂີດຄວາມສາມາດ ແລະພັດທະນາ ອົງການ ຢູ່ສູນກາງ ແລະສາຂາ**

ທຶນຮັບໃນ ປີ 2006 = 43,862.79 $
ຈ່າຍໃນປີທັງໝົດ = 41,146.20 $
ຍອດເຫລືອ = 2,716.59 $

**# ຜູ້ໃຫ້ທຶນຊ່ວຍເຫລືອຈາກກາແດງ** ແດນມາກ : **DRC.**
**(ສໍາລັບໂຄງການຮັກສາສຸຂະພາບຂັ້ນຕົ້ນ ຢູ່ 3 ແຂວງພາກເໜືອ: ຊຽງຂວາງ, ຫົວພັນ ແລະຜົ້ງສາລີ**

ທຶນຮັບໃນ ປີ 2006 = 1,138,217.00 $
ຈ່າຍໃນປີທັງໝົດ (ກດສກ) = 995,417.00 $
ຍອດເຫລືອ = 142,800.00 $

**# ຜູ້ໃຫ້ທຶນຊ່ວຍເຫລືອຈາກກາແດງ** ສະວີດສ **SRC (ໂຄງການ ຮັກສາສຸຂະພາບ 3 ແຂວງ ຫຼວງພະບາງ, ບໍ່ແກ້ວ, ອຸດົມໄຊ)**
ທຶນຮັບໃນ ປີ 2006 = 209,297.00 $
ລາຍຈ່າຍປີ 2006 = 181,067.25 $
ຍັງເຫຼືອ = 28,229.75 $

**ຜູ້ໃຫ້ທຶນຊ່ວຍເຫລືອຈາກກາແດງ**: ສະເປນ (Spain RC) ໂຄງການກໍ່ສ້າງຫ້ອງການ
ທຶນທີ່ໄດ້ຮັບ ປີ 2006 = 28,902.88 $ ກາແດງຫຼວງນໍ້າທາ
ລາຍຈ່າຍ = 28,902.88 $

**ຜູ້ໃຫ້ທຶນຊ່ວຍເຫລືອຈາກກາແດງ** ອິດສະຕາລີ (ARC) - ໂຄງການຕ້ານເອດ ແລະ ດູແລຜູ້ຕິດເຊື້ອ ( LNP+) ຢູ່ 5 ສາຂາແຂວງ: ຫຼວງພະບາງ, ຄໍາມ່ວນ, ສະຫວັນນະເຂດ, ບໍ່ແກ້ວ ແລະ ໄຊຍະບູລີ
ທຶນທີ່ໄດ້ຮັບ 1/06 - 6/07 = 128,670.00 $
ລາຍຈ່າຍ 1/06 - 4/07 = 92,862.00 $
ຍັງເຫຼືອ = 35,808.00 $

**ຜູ້ໃຫ້ທຶນຊ່ວຍເຫລືອຈາກກາແດງ** ເນເທີແລນ (NLRC) ສໍາລັບວຽກງານ ການພັດທະນາ ຊຸມຊົນ ແລະສ້າງຂີດຄວາມສາມາດ ແກ່ 3 ສາຂາ: ສາລະວັນ, ເຊກອງ ແລະອັດຕະປື.

| | | |
|---|---|---|
| ທຶນຮັບໃນ ປີ 2006 | = | 69,636.13 Euro |
| ລາຍຈ່າຍປີ 2006 | = | 58,943.83 Euro |
| ຍັງເຫຼືອ | = | 10,692.30 Euro |

**ຜູ້ໃຫ້ທຶນຊ່ວຍເຫລືອຈາກກາແດງ ຝລັ່ງ** FRC, ສໍາລັບວຽກງານສຸຂະສຶກສາ, ນໍ້າສະອາດ ແລະອານາໄມສິ່ງແວດລ້ອມ ຢູ່ 2 ສາຂາ: ແຂວງວຽງຈັນ ແລະໄຊຍະບູລີ

| | | |
|---|---|---|
| ທຶນທີ່ໄດ້ຮັບ ປີ 2006 | = | 450,000.00 $ |
| ລາຍຈ່າຍ ປີ 2006 | = | 450,000.00 $ |

**ຜູ້ໃຫ້ທຶນຊ່ວຍເຫລືອຈາກກາແດງ:** ກາແດງນິວຊີແລນ ຜ່ານສະຫະພັນກາແດງທີ່ບາງກອກ, ສະໜັບສະໜູນວຽກງານ ນໍ້າສະອາດ ແລະອານາໄມສິ່ງແວດລ້ອມ ຢູ່ ສາລະວັນ, ເຊກອງ ແລະອັດຕະປື.

| | | |
|---|---|---|
| ທຶນຮັບໃນ ປີ 2006 | = | 66,974.24 $ |
| ລາຍຈ່າຍປີ 2006 | = | 62,358.41 $ |
| ຍັງເຫຼືອ | = | 4,615.83 $ |

\# **ຜູ້ໃຫ້ທຶນຊ່ວຍເຫລືອຈາກ ຄະນະກໍາມະການກາແດງສາກົນ**: ICRC.

| | | |
|---|---|---|
| ທຶນຮັບໃນ ປີ 2006 | = | 23,550.00 $ |
| + ກິດຈະກໍາຂອງອົງການກາແດງ | = | 2,555.00 $ |
| + ກິດຈະກໍາເຝິກອົບຮົມ | = | 5,300.00 $ |
| + ເຜີຍແຜ່ກົດໝາຍມະນຸດສະທໍາ | = | 2,560.00 $ |
| + ອຸປະກອນຕ່າງໆ | = | 10,775.00 $ |
| ຈ່າຍໃນປີທັງໝົດ | = | 21,190.00 $ |
| ຍອດເຫລືອ | = | 2,365.00 $ |